rfa | ວິທຍຸເອເຊັຽເສຣີ

# ຊາວບ້ານລຳບາກຍ້ອນ ເຂື່ອນ ນ້ຳຄານ 2

ໄມຊູລີ
2018.05.23



*ໃນຂົງເຂດບໍຣິເວນ ເຂື່ອນນ້ຳຄານ 2 ທີ່ເປີດໃຊ້ແລ້ວ*

ປະຊາຊົນ ເກືອບ 400 ຄອບຄົວ ເຂດບ້ານພູຊ້າງ ຫຼື ບ້ານຈັດສັນ ທີ່ຖືກກະທົບ ຈາກໂຄງການ ເຂື່ອນໄຟຟ້າ ນ້ຳຄານ 2 ເມືອງຊຽງເງິນ ແຂວງຫລວງພຣະບາງ ຍັງບໍ່ມີດິນປູກຝັງ ເຖິງແມ່ນວ່າ ໂຄງການເຂື່ອນ ດັ່ງກ່າວ ສ້າງສຳເຣັດມາແລ້ວ ຕັ້ງແຕ່ ປີ 2015 ກໍຕາມ. ກ່ຽວກັບ ເຣື້ອງນີ້ ເຈົ້າໜ້າທີ່ທ້ອງຖິ່ນ ຜູ້ບໍ່ປະສົງອອກຊື່ ກ່າວຕໍ່ ວິທຍຸ ເອເຊັຍເສຣີ ວ່າ:

*“ກໍມີເຮືອນໃຫ້ແລ້ວ ເວົ້າແລ້ວກໍບໍ່ຍາກດີຂຶ້ນທັ້ນແຫລະເນາະ ເນື້ອທີ່ ທຳການຜລິດ ກໍບໍ່ຍາກມີປານໃດ ບາດນີ້ ບ້ານຫລາຍບ້ານ ມາໂຮມ ເປັນບ້ານດຽວ ຂອງງົບປະມານ ຈາກໂຄງການໄປເພິ່ນກໍ ບໍ່ທັນສນອງ ໃຫ້ໄປຈັດສັນຕອນດິນໃຫ້ເຂົາເຈົ້າກໍຖືວ່າ 300 ກວ່າຄອບຄົວ ທັ້ນແຫລະ ຍັງບໍ່ທັນ ຈັດສັນເທື່ອເນາະ.”*

ທ່ານກ່າວວ່າ ເຂື່ອນນ້ຳຄານ 2 ເຣີ່ມກໍ່ສ້າງມາແຕ່ ປີ 2010 ແລະ ສ້າງສຳເຣັດ ໃນປີ 2015 ຂນະທີ່ມີປະຊາຊົນ ໄດ້ຮັບຜົນກະທົບ ຢູ່ 4 ບ້ານ ຈຳນວນ 300 ປາຍຄອບຄົວກໍໄດ້ໄປອາສັຍຢູ່ ບ້ານຈັດສັນຕັ້ງແຕ່ ປີ 2010 ແຕ່ການຊ່ວຍເຫຼືອ ແລະ ການຊົດເຊີຍ ຂອງທາງການ ເປັນໄປຫລາາຊ້າ ເມື່ອ 2 ປີຜ່ານມາຫາກໍໄດ້ເຮືອນ ໄດ້ສຸຂສາລາ ໂຮງຮຽນ ແລະ ຣະບົບນ້ຳສອາດ ສ່ວນເຣື້ອງອາຊີບ ແລະການຊອກຫາ ຣາຍຮັບ ຍັງບໍ່ມີ, ທຸກມື້ນີ້ ປະຊາຊົນ ທຸກຄອບຄົວ ອາສັຍການປູກເຂົ້າ ຕາມຮ່ອມພູ ຕາມຜາ ຫຼືດິນບໍ່ມີເຈົ້າຂອງ ພໍກຸ້ມຄອບຄົວ.

ກ່ຽວກັບເຣື້ອງນີ້ ເຈົ້າໜ້າທີ່ ກ່ຽວຂ້ອງເວົ້າວ່າ ໃນຣະຍະຜ່ານມາ ກໍໄດ້ສເນີໃຫ້ທາງໂຄງການແລ້ວ ແຕ່ບໍທັນໄດ້ຮັບຄຳຕອບເທື່ອ ຍ້ອນບໍ່ມີ ງົບປະມານ ທ່ານວ່າ:

*"ບ້ານຈັດສັນພູຊ້າງ ກໍຖືວ່າ ເຂົາເຈົ້າກໍທຳການຜລິດ ເຮັດໄຮ່ເຂົ້າຫັ້ນແຫຼະ ເຮັດໄຮ່ປູກເຂົ້າ ເຂົາກໍປູດອ້ອມແອ້ມແຖວບ້ານຫັ້ນແຫຼະ ຍັງບໍ່ມີ ຫຍັງທີ່ຈະໄປຊ່ວຍ ເຂົາເຈົ້າເທື່ອ ເຣື້ອງງົບປະມານ ເຮົາບໍ່ມີ ຢາກໃຫ້ເຂົາຈັດສັນ ກໍຕ່ຳສຸດກໍຄອບຄົວນຶ່ງ 3 ເຮັກຕາ ຕົວນີ້ຍັງຄິດແລ້ວ ເວົ້າໄປກໍຍັງດົນ ເພາະວ່າຂໍຢູ່ ດ້ວຍງົບປະມານເຮົາບໍ່ມີ."*

ເຂື່ອນນ້ຳຄານ 2 ມີຂນາດ 13 ເມກາວັດ ມູນຄ່າ 350 ລ້ານ ໂດລາ ສະຫະຣັຖ ໄຟຟ້າຈາກເຂື່ອນສ່ວນໃຫຍ່ ຜລິດເພື່ອຕອບສນອງພື້ນທີ່ ຊົນນະບົດ ທາງພາກເໜືອຂອງລາວ ທີ່ໄຟຟ້າຍັງໄປ ບໍ່ຮອດ. ເຂື່ອນນ້ຳຄານ 2 ເປັນຂອງຣັຖວິສຫະກິດໄຟຟ້າລາວຖືຫຸ້ນ 100% ແຕ່ເງິນ ທີ່ໃຊ້ລົງທຶນນັ້ນ ເປັນເງິນກູ້ຢືມ ຈາກທານະຄານ ເພື່ອການສົ່ງອອກແລະນຳເຂົ້າຂອງຈີນ.